**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**ບໍລິສັດ ດັກລັກ ຣັບເບີ ຈຳກັດ**

**DAKLAORUCO** *ປາກເຊ, ວັນທີ **27** ເດືອນ **06** ປີ **2023***

**ຄຳໝັ້ນສັນຍາ**

**ປະຕິບັດຕາມສົນທິສັນຍາສະບັບເລກທີ 87 ແລະ 98**

ພາຍຫຼັງທີ່ຄົ້ນຄວ້າ ແລະ ສຶກສາ ບັນດາກົດລະບຽບການຂອງ ສປປ ລາວ ກ່ຽວກັບການຈັດຕັ້ງ, ກິດຈະກຳ ແລະ ຄຸ້ມຄອງສະມາຄົມ; ພາຍຫຼັງໄດ້ຮັບຟັງການເຜີຍແຜ່ເນື້ອໃນຂອງສົນທິສັນຍາສະບັບເລກທີ 87 ແລະ ສົນທິສັນຍາ ສະບັບເລກທີ 98 ວ່າດ້ວຍອິດສະລະໃນການຮ່ວມມື ແລະ ເຈລະຈາຂອງ ອົງການ ILO; ຜ່ານການຝຶກອົບຮົມ ແລະ ແນະນຳ 10 ຫຼັກການໃນມາດຕະຖານການຄຸ້ມຄອງປ່າໄມ້ແບບຍືນຍົງຂອງ FSC - STD-LAO-01-2020. ຄະນະນຳ ແລະ ພະນັກງານກຳມະກອນ ຂອງບໍລິສັດ ດັກລັກ ຣັບເບີ ຈຳກັດ

**ໃຫ້ຄຳໝັ້ນສັນຍາ**

1. ບໍລິສັດ ດັກລັກ ຣັບເບີ ຈຳກັດ ເຄົາລົບ ແລະ ປະຕິບັດຕາມກົດໝາຍຂອງ ສປປ ລາວ ວ່າດ້ວຍການຈັດຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງສະມາຄົມ; ປະຕິບັດຕາມສົນທິສັນຍາ ສະບັບເລກທີ 87 ແລະ ສົນທິສັນຍາ ສະບັບເລກທີ 98 ວ່າດ້ວຍອິດສະລະໃນການຮ່ວມມື ແລະ ເຈລະຈາຂອງອົງການ ILO ຢ່າງເຂັ້ມງວດ.

2. ພະນັກງານ, ກຳມະກອນ ແລະ ຜູ້ອອກແຮງງານໃນບໍລິສັດໄດ້ຮັບການອະນຸຍາດໃຫ້ສ້າງຕັ້ງ ຫຼື ເຂົ້າຮ່ວມອົງການຈັດຕັ້ງແຮງງານທີ່ເຂົາເຈົ້າຕ້ອງການຕາມລະບຽບການກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງສະມາຄົມຂອງລັດ ແລະ ຕາມມາດຕາຂອງສົນທິສັນຍາສາກົນທີ່ ສປປ ລາວ ທີ່ໄດ້ລົງນາມ.

3. ອົງການຈັດຕັ້ງແຮງງານໄດ້ຮັບອະນຸຍາດໃຫ້ດຳເນີນງານຕາມກົດລະບຽບຂອງອົງການຂອງຕົນ ຢູ່ໃນຂອບເຂດການຄຸ້ມຄອງປ່າໄມ້ຂອງບໍລິສັດ, ແຕ່ຕ້ອງປະຕິບັດຕາມລະບຽບການຂອງລັດ ແລະ ລະບຽບການຂອງບໍລິສັດຕາມໜ້າທີ່ ແລະ ອຳນາດທີ່ໄດ້ຮັບມອບໝາຍ.

4. ບັນດາອົງການຈັດຕັ້ງ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງຜູ້ອອກແຮງງານ ໄດ້ຮັບການເປີດເຜີຍ; ບໍລິສັດບໍ່ໄດ້ແຊກແຊງກິດຈະກຳຂອງອົງການຈັດຕັ້ງຜູ້ອອກແຮງງານ ທີ່ສ້າງຕັ້ງຂຶ້ນໃນຂໍ້ 2 ຂອງຄຳໝັ້ນສັນຍາສະບັບນີ້. ບໍລິສັດບໍ່ແຊກແຊງສິດແລະພັນທະຂອງ ຜູ້ອອກແຮງງານ ຕໍ່ກັບອົງການຈັດຕັ້ງທີ່ເຂົາເຈົ້າໄດ້ເຂົ້າຮ່ວມ.

ຄຳໝັ້ນສັນຍາສະບັບນີ້ໄດ້ຖືກຮັບຮອງເອົາໂດຍພະນັກງານກຳມະກອນທັງໝົດຂອງບໍລິສັດໃນກອງປະຊຸມຜູ້ຕາງໜ້າ ຜູ້ອອກແຮງງານ ຂອງບໍລິສັດໃນວັນທີ 27 ເດືອນ 6 ປີ 2023.

**ປະທານກຳມະບານຮາກຖານບໍລິສັດ** **ຜູ້ອຳນວຍການບໍລິສັດ**

ບໍລິສັດ ດັກລັກ ຣັບເບີ ຈຳກັດ DAKLAK RUBBER CO.,LTD

*Nguyễn Đức Hạnh*

**PhoneThida Theppannha**